*Journal of Science and Teacher Education (JLSTE), 1*(1), 224-231

# ການນຳເອົາແນວຄິດການຮຽນຮູ້ຕະຫຼອດຊີວິດໄປໃຊ້ໃນການປະຕິບັດຕົວຈິງຂອງນັກສຶກສາຝຶກຫັດຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ສົກສຶກສາ 2023-2024

*ສຸກສັນ ໄຊຍະວົງ*, ຕຸລາວັນ ສີສະຫວັດ, ເກດສະໜາ ກັນຍາສານ, ວັນທະລາ ສຸວັນໄຊ*

*ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ*

## ບົດຄັດຫຍໍ້

ບົດຄົ້ນຄວ້ານີ້ມີຈຸດປະສົງ 1) ເພື່ອສຶກສາຄວາມຄືບໜ້າ ແລະ ຜົນສຳເລັດໃນການສົ່ງເສີມການຮຽນຮູ້ຕະຫຼອດຊີວິດທີ່ຈັດຕັ້ງປະຕິບັດໄລຍະຜ່ານມາ; 2) ເພື່ອສຶກສາການນຳເອົາແນວຄິດທັກສະທາງສັງຄົມສຳລັບຜູ້ໃຫຍ່ໄປໃຊ້ໃນການເຮັດວຽກຕົວຈິງ ແລະ 3) ເພື່ອສຶກສາແນວທາງໃນການສົ່ງເສີມການປັບເນື້ອໃນ ແລະ ການສອນການຮຽນຮູ້ຕະຫຼອດຊີວິດ. ການສຶກສາຄັ້ງນີ້ແມ່ນເກັບກຳຂໍ້ມູນຈາກກຸ່ມຕົວຢ່າງຈາກສະຖານການສຶກສາ 12 ແຫ່ງ ລວມເປັນຈຳນວນ 113 ຄົນ, ຍິງ 92 ຄົນ ຂອງສົກຮຽນ 2023-2024. ການວິເຄາະຂໍ້ມູນແມ່ນໃຊ້ໂປຣແກຣມ Microsoft Excel ໂດຍວິເຄາະຫາຄ່າຄວາມຖີ່ ($f$), ຄິດໄລ່ຊອກຫາຄ່າສະເລ່ຍ ($\bar{X}$) ແລະ ສ່ວນຮ້ອຍ (%) ຂອງຂໍ້ມູນຜູ້ຕອບແບບສອບຖາມດ້ານຕ່າງໆໂດຍອີງໃສ່ເກນແປຜົນ. ຜົນການຄົ້ນຄວ້າພົບວ່າ ການຈັດຕັ້ງປະຕິບັດການຮຽນຮູ້ຕະຫຼອດຊີວິດມີຄວາມຄືບໜ້າຢູ່ໃນລະດັບຫຼາຍ ໃນດ້ານການສຶກສາໃນໂຮງຮຽນ, ນອກໂຮງຮຽນ ແລະ ຕາມອັດທະຍາໄສ, ຫຼັກການສອນຕາມທິດສະດີການສອນຜູ້ໃຫຍ່ ແລະ ທັກສະທາງສັງຄົມສຳລັບຜູ້ໃຫຍ່. ການນຳເອົາແນວຄິດທັກສະທາງສັງຄົມສຳລັບຜູ້ໃຫຍ່ 6 ທັກສະເຫັນວ່າທຸກທັກສະແມ່ນໄດ້ນຳໃຊ້ຢູ່ໃນລະດັບຫຼາຍເຊັ່ນກັນ. ຜົນການຄົ້ນຄວ້ານີ້ຍັງສະເໜີແນວທາງໃນການສົ່ງເສີມການປັບເນື້ອໃນ ແລະ ການສອນການຮຽນຮູ້ຕະຫຼອດຊີວິດ ໂດຍເນັ້ນໃສ່ໃຫ້ມີການກຳນົດການສອນໄປຕາມສັດສ່ວນທີ່ເໝາະສົມຄື: ທິດສະດີ, ການປະຕິບັດຕົວຈິງ ແລະ ການຮຽນຮູ້ດ້ວຍຕົນເອງ; ການແນະນຳເຕັກນິກການສອນ, ສິ່ງອຳນວຍຄວາມສະດວກ ແລະ ການນຳໃຊ້ເທັກໂນໂລຊີທັນສະໄໝເພື່ອຊ່ວຍເຂົ້າໃນການສອນໃຫ້ຫຼາກຫຼາຍຂຶ້ນ.

***ຄຳສັບສຳຄັນ**: ແນວຄິດການຮຽນຮູ້ຕະຫຼອດຊີວິດ, ທັກສະການຮຽນຮູ້, ຜົນສຳເລັດການຮຽນຮູ້*

**ຕິດຕໍ່ພົວພັນ: ສຸກສັນ ໄຊຍະວົງ, ໂທ: 020 29800914; ອີເມວ: Larsuksanh11@gmail.com*

# The Application of Lifelong Learning Concepts by Practicum Student Teachers from the Faculty of Education, National University of Laos, in the Academic Year 2023-2024

*Souksanh SAYAVONG*, Toulavanh SISAVATH, Kethsana KANYASAN and Vanthala SOUVANXAY*
*Faculty of Education, National University of Laos*

## Abstract

The objectives of the study are: 1) To examine the progression and success in promoting lifelong learning that has been implemented in the past; 2) to analyze the application of soft skills for adults in real work environments; and 3) to provide recommendations for improving lifelong learning lesson content and teaching methods. This study collected data from 12 targeted schools, with a total of 113 participants (86 female). A questionnaire and an interview guideline were used to collect data. The data was analyzed using Microsoft Excel to determine the frequency (f), percentage (%), and mean ($\bar{X}$). The study found that the knowledge and application aspects of lifelong learning content were at a high level, particularly knowledge related to formal, non-formal, and informal education, followed by the principles of adult education theory and soft skills for adults. Additionally, the study found that the application of the six concepts of soft skills for adults in real work environments was at a high level. The study suggested guidelines for revising lifelong learning content and teaching by integrating a blended learning approach that combines formal, non-formal, and informal education within a clear system (theory, practice, and self-learning). It also recommended introducing innovative teaching techniques, providing appropriate teaching materials and facilitation, and utilizing modern technology (such as applications) to enhance teaching activities.

***Keywords:*** *Concept of lifelong learning, Skills of learning, Success of learning*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ພາຍຫຼັງການຈັດຕັ້ງປະຕິບັດການທົດລອງສອນ ເນື້ອໃນລາຍວິຊາການຮຽນຮູ້ຕະຫຼອດຊີວິດກໍ ຄືການສຶກສາສຳລັບຜູ້ໃຫຍ່ເຂົ້າໃນຫຼັກສູດຂອງ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ, ໃນສົກສຶກສາ 2017-2018 ແລະ ໄດ້ພັດທະນາເນື້ອໃນຕຳລາປະກອບການສຶກສາມາເປັນແຕ່ລະໄລຍະຄື 2020, 2022 ແລະ 2023, ສາມາດນຳເອົາແນວຄິດ, ທິດສະດີ, ຫຼັກການ ແລະ ເຕັກນິກການຮຽນຮູ້ຕະຫຼອດຊີວິດເຂົ້າໃນ ຫຼັກສູດການສ້າງຄູຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ສຳເລັດ ຄື ຫຼັກສູດ ຄູອະນຸບານ, ຄູປະຖົມສຶກສາ ແລະ ຄູມັດທະຍົມສຶກສາໃນລະດັບປະລິນຍາຕີໄດ້ສຳເລັດ ແລະ ຈັດຕັ້ງປະຕິບັດໃນສົກສຶກສາ 2023-2024 ເນື້ອໃນຂອງປຶ້ມປະກອບດ້ວຍ 4 ພາກຄື: ຄວາມຮູ້ພື້ນຖານກ່ຽວກັບການຮຽນຮູ້ຕະຫຼອດຊີວິດ, ທິດສະດີການ ຮຽນຮູ້ສຳລັບຜູ້ໃຫຍ່, ທັກສະທາງສັງຄົມສຳລັບຜູ້ໃຫຍ່ ແລະ ການປະເມີນຜົນການຮຽນສຳລັບຜູ້ໃຫຍ່ ເພື່ອຄວາມສະດວກໃນການຈັດຕັ້ງປະຕິບັດການຮຽນ-ການສອນ ແລະ ແຕ່ງບົດສອນພວກເຮົາໄດ້ແບ່ງອອກເປັນ 16 ບົດ.(ຄະນະສຶກສາສາດ, ບົດສະຫຼຸບຜົນການຈັດຕັ້ງປະຕິບັດໂຄງການ DVVI 2023)

ໃນສົກສຶກສາ 2023-2024 ຄະນະສຶກສາສາດໄດ້ນຳເອົາແນວຄິດ, ທິດສະດີຫຼັກການ ການຮຽນຮູ້ຕະຫຼອດຊີວິດເຂົ້າໃນຫຼັກສູດການຮຽນ-ການສອນມາເປັນ ຊຸດທີ່ 5 ແລະ ໃນສົກສຶກສານີ້ມີນັກສຶກສາ ປີ 4 ຄະນະສຶກສາສາດ ມຊ. ທີ່ລົງຝຶກຫັດວິຊາຊີບ ຈຳນວນ 113 ຄົນ; ໄປຝຶກຫັດຢູ່ 2 ແຂວງ (ນະຄອນຫຼວງ ແລະ ບໍລິຄຳໄຊ), 5 ເມືອງ (ໄຊທານີ, ປາກຊັນ, ບໍລິຄັນ, ປາກກະດິງ ແລະ ຄຳເກີດ) , 12 ສະຖານການສຶກສາ (ຄະນະສຶກສາສາດ, ແຜນຝຶກຫັດວິຊາຊີບຄູ 2023-2024)

ເພື່ອປະຕິບັດຕາມການແນະນຳຂອງຊ່ຽວຊານຂອງອົງການ ດີວີວີ (DVVI) ໃນການຕິດຕາມ ແລະ ປະເມີນ ຜົນການນຳເອົາຄວາມຮູ້ທີ່ໄດ້ຈາກວິຊາການຮຽນຮູ້ຕະຫຼອດຊີວິດ ໄປໃຊ້ການປະຕິບັດໜ້າວຽກ ແລະ ການໃຊ້ຊີວິດ ປະຈຳວັນ ພ້ອມທັງເປັນແນວທາງໃນການສົ່ງເສີມ, ປັບປຸງເນື້ອໃນຂອງລາຍວິຊາການຮຽນຮູ້ຕະຫຼອດຊີວິດ, ວິທີການສອນໃຫ້ແທດເໝາະກັບສະພາບຄວາມຕ້ອງການຂອງສັງຄົມກໍຄື ຜູ້ຮຽນ. ດັ່ງນັ້ນ, ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ແລະ ຫ້ອງການນາໆຊາດເພື່ອການສຶກສາສຳລັບຜູ້ໃຫຍ່ຂອງເຢຍລະມັນ (DVVI) ຈຶ່ງໄດ້ຮ່ວມກັນດຳເນີນການຕິດຕາມຜົນການນຳເອົາແນວຄິດການຮຽນຮູ້ຕະຫຼອດຊີວິດໄປໃຊ້ໃນການປະຕິບັດຕົວຈິງ ຂອງນັກສຶກສາຝຶກຫັດຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດໃນ ສປປ. ລາວ ສົກສຶກສາ 2023-2024.

### *1.2. ຄຳຖາມຂອງການຄົ້ນຄ້ວາ*

1. ຄວາມຄືບໜ້າ ແລະ ຜົນສຳເລັດໃນການສົ່ງເສີມ ການຮຽນຮູ້ຕະຫຼອດຊີວິດທີ່ຈັດຕັ້ງປະຕິບັດໄລຍະຜ່ານມາເປັນແນວໃດ ?
2. ການນຳເອົາແນວຄິດທັກສະທາງສັງຄົມສຳລັບຜູ້ໃຫຍ່ໄປໃຊ້ໃນການເຮັດວຽກຕົວຈິງສິ່ງໃດໃຊ້ຫຼາຍ ?
3. ແນວທາງໃນການສົ່ງເສີມການປັບເນື້ອໃນ ແລະ ການສອນການຮຽນຮູ້ຕະຫຼອດຊີວິດຄວນເປັນແນວໃດ ?

### *1.3. ຈຸດປະສົງຂອງການຄົ້ນຄ້ວາ*

ໃນການສຶກສາຜົນການນຳເອົາແນວຄິດການຮຽນຮູ້ຕະຫຼອດຊີວິດໄປໃຊ້ໃນການປະຕິບັດຕົວຈິງຂອງນັກສຶກສາ ຝຶກ

ຫັດຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດໃນ ສປປ. ລາວ ສົກສຶກສາ 2023-2024 ຈຸດປະສົງ ໃນການຈັດຕັ້ງປະຕິບັດ ໃຫ້ບັນລຸເປົ້າໝາຍດັ່ງນີ້:

1. ເພື່ອສຶກສາຄວາມຄືບໜ້າ ແລະ ຜົນສຳເລັດໃນການສົ່ງເສີມ ການຮຽນຮູ້ຕະຫຼອດຊີວິດທີ່ຈັດຕັ້ງປະຕິບັດໄລຍະຜ່ານມາ

2. ເພື່ອສຶກສາການນຳເອົາແນວຄິດທັກສະທາງສັງຄົມສຳລັບຜູ້ໃຫຍ່ ໄປໃຊ້ໃນການເຮັດວຽກຕົວຈິງ

3. ເພື່ອສຶກສາແນວທາງໃນການສົ່ງເສີມການປັບເນື້ອໃນ ແລະ ການສອນການຮຽນຮູ້ຕະຫຼອດຊີວິດ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ສຸກສັນ ໄຊຍະວົງ ພ້ອມຄະນະ (2022) ໄດ້ສຶກສາຄວາມຄິດເຫັນກ່ຽວກັບຄວາມຕ້ອງການ ໃນການຝຶກອົບຮົມ ວິຊາການຮຽນຮູ້ຕະຫຼອດຊີວິດຂອງສະຖາບັນການສຶກສາ, ອົງການພາກລັດ ແລະ ເອກະຊົນ ທີ່ມີຄວາມສົນໃຈ, ນະຄອນຫຼວງວຽງຈັນ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ. ກຸ່ມເປົ້າໝາຍໃນ ການຄົ້ນຄວ້າຄັ້ງນີ້ທັງໝົດ 445 ຄົນ, ເຄື່ອງທີ່ໃຊ້ໃນການຄົ້ນຄວ້າແມ່ນນຳໃຊ້ແບບສອບຖາມດ້ວຍ 3 ຕອນ ຄື: ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ, ຄວາມຕ້ອງການໃນການຝຶກອົບຮົມໃນແຕ່ລະດ້ານ ປະກອບມີ 4 ດ້ານ ຄື: ດ້ານຄວາມຮູ້ພື້ນຖານກ່ຽວກັບການຮຽນຮູ້ຕະຫຼອດຊີວິດ, ດ້ານທິດສະດີການຮຽນຮູ້ສຳລັບຜູ້ໃຫຍ່, ທັກສະທາງສັງຄົມສຳລັບຜູ້ໃຫຍ່, ການປະເມີນຜົນການຮຽນສຳລັບຜູ້ໃຫຍ່ ແລະ ພາກຄວາມຄິດເຫັນເພີ່ມຕື່ມ ເຊິ່ງທັງໝົດປະກອບດ້ວຍ 55 ຄຳຖາມ. ການວິເຄາະຂໍ້ມູນໂດຍການໃຊ້ໂປຣແກມສຳເລັດຮູບທາງສະຖິຕິ (SPSS) ເພື່ອຊອກຫາຄ່າຄວາມຖີ່ (F) ແລະ ຄ່າສ່ວນຮ້ອຍ (%) ເຊິ່ງລາຍລະອຽດການຄົ້ນຄວ້າມີດັ່ງລຸ່ມນີ້:

ຜູ້ເຂົ້າຮ່ວມທັງໝົດໃນການສຶກສາຄັ້ງນີ້ແມ່ນມີຄວາມຕ້ອງການໃນການຝຶກອົບຮົມຫຼັກສູດການຮຽນຮູ້ຕະຫຼອດຊີວິດຂອງຄະນະສຶກສາດ ມະຫາວິທະຍາໄລແຫ່ງຊາດ. ເນື້ອໃນທີ່ຄວນເປັນຄວາມຮູ້ຫຼັກ (ສິ່ງທີ່ຕ້ອງໄດ້ຮູ້) ແມ່ນຄວາມເປັນມາຂອງການຮຽນຮູ້ຕະຫຼອດຊີວິດ, ນະໂຍບາຍຕ່າງໆຕໍ່ການຮຽນຮູ້ຕະຫຼອດຊີວິດ, ການພັດທະນາ ແບບຍືນຍົງ, ນະໂຍບາຍສາກົນຕໍ່ກັບການຮຽນຮູ້ຕະຫຼອດຊີວິດ, ແນວຄິດ-ທິດສະດີການຮຽນຮູ້ສຳລັບຜູ້ໃຫຍ່, ຈຸດພິເສດການຮຽນຮູ້ຂອງຜູ້ໃຫຍ່, ການສຶກສາຜູ້ໃຫຍ່ໃນເປົ້າໝາຍການພັດທະນາແບບຍືນຍົງ ແລະ ຄວາມເປັນມາ ແລະ ຄວາມໝາຍຂອງວິທີການສິດສອນຜູ້ໃຫຍ່, ທັກສະການຕັດສິນໃຈ, ການແກ້ໄຂຂໍ້ຂັດແຍ່ງ ແລະ ພາວະຄວາມເປັນຜູ້ນຳ, ຄວາມສຳຄັນຂອງການປະເມີນຜົນການຮຽນຮູ້ສຳລັບຜູ້ໃຫຍ່, ແນວຄິດ-ທິດສະດີການປະເມີນ ການຮຽນຮູ້ສຳລັບຜູ້ໃຫຍ່, ຈຸດປະສົງຂອງການປະເມີນຜູ້ໃຫຍ່ ແລະ ຫຼັກການຂອງການປະເມີນຜູ້ໃຫຍ່, ສະຖານທີ່ຝຶກອົບຮົມ ຫ້ອງການຂອງຕົນເອງ, ຝຶກອົບຮົມໃນເວລາລາຊະການ ລະຫວ່າງວັນຈັນ-ສຸກ ໃນໄລຍະເວລາ 5 ວັນ.

## 3. ວິທີດຳເນີນການຄົ້ນຄວ້າ

ຕິດຕາມຜົນການນຳເອົາແນວຄິດການຮຽນຮູ້ຕະຫຼອດຊີວິດ ໄປໃຊ້ໃນການປະຕິບັດຕົວຈິງຂອງນັກສຶກສາ ຝຶກຫັດຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດໃນ ສົກສຶກສາ 2023-2024 ເປັນການຄົ້ນຄວ້າໂດຍນຳ ໃຊ້ຮູບແບບປະສົມປະສານ (Mixed Method) ປະລິມານ ແລະ ຄຸນນະພາບ (Quantitative and Qualitative Research) ເພື່ອສຳຫຼວດຄວາມຄິດເຫັນຂອງນັກສຶກສາຄູຝຶກຫັດຄະນະສຶກສາສາດ ມະຫາວິທະຍາໄລແຫ່ຊາດ ໃນສົກສຶກສາ 2023-2024 ຈຳນວນ 8 ສາຂາວິຊາ, 12 ສະຖານທີ່ຝຶກຫັດ. ໂດຍມີຂັ້ນຕອນດຳເນີນການ ຄົ້ນຄວ້າດັ່ງນີ້:

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ກຸ່ມເປົ້າໝາຍໃນການສຶກສາຄັ້ງນີ້ແມ່ນນັກສຶກສາຄູຝຶກຫັດຄະນະສຶກສາສາດມະຫາວິທະຍາໄລແຫ່ຊາດໃນສົກສຶກສາ 2023-2024 ຈຳນວນ 8 ສາຂາວິຊາ, 12 ສະຖານທີ່ຝຶກຫັດ ຈຳນວນ 113 ຄົນ; ຍິງ 92 ຄົນ.

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ກ. ຂໍ້ມູນແບບປະລິມານ ແມ່ນໄດ້ນຳໃຊ້ ຮ່າງເກັບກຳຂໍ້ມູນທີ່ຮັບຮອງຈາກຄະນະຮັບຜິດຊອບໂຄງການ ຂອງ ຄະນະສຶກສາສາດ ຄື:

- ສະຖານະພາບຂອງນັກສຶກສາຄູຝຶກຫັດໃນຮູບແບບ Check list ຄຳຄິດເຫັນຕໍ່ກັບເນື້ອໃນການຮຽນຮູ້ຕະຫຼອດຊີວິດ ເກັບກຳຂໍ້ມູນໂດຍໃຊ້ເກນມາດຕາສ່ວນປະເມີນຄ່າ (Rating scale) ຕາມແບບຂອງລິເຄີດ

- ທັກສະການຮຽນຮູ້ຕະຫຼອດຊີວິດທີ່ໄດ້ນາໃຊ້ຫຼາຍທີ່ສຸດດ້ວຍການຈັດລຳດັບ ທັກສະການຮຽນຮູ້ຕະຫຼອດຊີວິດ 6 ທັກສະທີ່ທ່ານໄດ້ນຳໃຊ້ໃນລະຫວ່າງລົງຝຶກຫັດວິຊາຊີບຄູຄື ຈາກນ້ອຍຫາໃຫຍ່ 1-6 (1ໃຊ້ຫຼາຍ ທີສຸດ - 6 ແມ່ນໃຊ້ນ້ອຍທີສຸດ).

ຂ. ຂໍ້ມູນແບບຄຸນນະພາບ ແມ່ນນຳໃຊ້ຄູ່ມືສຳພາດ ແບບເຄິ່ງໂຄງສ້າງ ເພື່ອເກັບຂໍ້ມູນວິທີການຮຽນ-ການສອນໃນ 3 ຮູບແບບ, ວິທີປັບປຸງການຮຽນ-ການສອນ ແລະ ບົດຮຽນທີ່ຕ້ອງການຮຽນຮູ້ເພີ່ມເຕີມ.

*3.3 ວິທີເກັບກຳຂໍ້ມູນ*

ກ. ວິທີການເກັບກຳຂໍ້ມູນແບບປະລິມານທີມຜູ້ສຶກສາໄດ້ກຳນົດກຸ່ມເປົ້າໝາຍ ແລະ ມອບໝາຍໃຫ້ຄະນະ ຮັບຜິດຊອບທີ່ຖືກແຕ່ງຕັ້ງເກັບກຳຂໍ້ມູນ, ໃນໄລຍະລົງເກັບກຳຂໍ້ມູນ ຫຼັງຈາກນັ້ນສັງລວມ ຂໍ້ມູນທີ່ສາມາດເກັບກຳໄດ້ທັງໝົດໃນຖານຂໍ້ມູນ ເພື່ອວິເຄາະໃນຂັ້ນຕໍ່ໄປ.

ຂ. ວິທີການເກັບກຳຂໍ້ມູນແບບຄຸນນະພາບໄດ້ດຳເນີນຕາມຂັ້ນຕອນດັ່ງນີ້;

- ຄະນະຮັບຜິດຊອບໄດ້ລົງໄປສໍາພາດນັກສຶກສາຝຶກຫັດໃນບັນດາສະຖານການສຶກສາເປົ້າໝາຍ (ນະຄອນ ຫຼວງວຽງຈັນ ແລະ ບໍລິຄໍາໄຊ) ຈໍານວນ 12 ແຫ່ງ

- ສໍາພາດນັກສຶກສາຝຶກຫັດຕົວຈິງໂດຍກໍານົດເອົາຕົວແທນຂອງນັກສຶກສາແຕ່ລະສາຂາໃນແຕ່ລະສະຖານ ການສຶກສາດ້ວຍຄູ່ມືສໍາພາດແລ້ວຈົດບັນທຶກ

- ສັງລວມແບບສໍາພາດ, ໃສ່ລະຫັດ ແລະ ບັນທຶກລົງໃນຖານຂໍ້ມູນ

*3.4 ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ*

*3.4.1 ແບບປະລິມານ*

ທີມຄົ້ນຄວ້າໄດ້ວິເຄາະຂໍ້ມູນ ແລະ ກວດສອບຄວາມຖືກຕ້ອງຂອງຂໍ້ມູນໃຫ້ສົມບູນ ແລ້ວມາຈັດລຽງຂໍ້ມູນ ໂດຍໃຊ້ໂປຣແກມສໍາເລັດຮູບ Microsoft Excel ເພື່ອວິເຄາະຫາຄ່າຄວາມຖີ່ (f), ຄິດໄລ່ຊອກຫາຄ່າສະເລ່ຍ ($\bar{X}$) ແລະ ສ່ວນຮ້ອຍ (%) ຂອງຂໍ້ມູນຜູ້ຕອບແບບສອບຖາມດ້ານຕ່າງໆອີງໃສ່ເກນແປຜົນຕາມເກນດັ່ງນີ້:

4.51-5.00 ໝາຍເຖິງຄວາມຮູ້ ແລະ ການນາໃຊ້ ຢູ່ໃນລະດັບ ດີຫຼາຍ

3.51-4.50 ໝາຍເຖິງຄວາມຮູ້ ແລະ ການນາໃຊ້ ຢູ່ໃນລະດັບ ດີ

2.51-3.50 ໝາຍເຖິງຄວາມຮູ້ ແລະ ການນາໃຊ້ ຢູ່ໃນລະດັບ ປານກາງ

1.51-2.50 ໝາຍເຖິງຄວາມຮູ້ ແລະ ການນາໃຊ້ ຢູ່ໃນລະດັບ ອ່ອນ

1.00-1.50 ໝາຍເຖິງຄວາມຮູ້ ແລະ ການນາໃຊ້ ຢູ່ໃນລະດັບ ອ່ອນຫຼາຍ

(ບຸນຊົມ ສີສະອາດ, 2545, ໜ້າ 102-103)

ຈັດລໍາດັບ ທັກສະການຮຽນຮູ້ຕະຫຼອດຊີວິດ 6 ທັກສະ ທີ່ໄດ້ນໍາໃຊ້ ຈາກນ້ອຍຫາໃຫຍ່ 1-6 (1ໃຊ້ຫຼາຍທີ່ສຸດ - 6 ແມ່ນໃຊ້ນ້ອຍທີ່ສຸດ).

*3.4.2 ແບບຄຸນະພາບ*

ທີມຜູ້ສຶກສາໄດ້ສັງລວມ ແລະ ກວດສອບຄວາມຖືກຕ້ອງຂອງຂໍ້ມູນໃຫ້ສົມບູນ ແລ້ວມາຈັດລຽງຂໍ້ມູນທີ່ໄດ້ບັນທຶກລະຫວ່າງການສໍາພາດ ໂດຍດໍາເນີນການວິເຄາະດ້ວຍມື (Manoully) ຕາມເນື້ອໃນໃຈຄວາມ (Thematic Analysis) ອີງໃສ່ຄໍາຖາມ ແລະ ຈຸດປະສົງຂອງການຄົ້ນຄວ້າ ເຊິ່ງມີຂັ້ນຕອນດັ່ງນີ້:

- ເຂົ້າລະຫັດ (Coding)
- ຈັດກຸ່ມໃຫຍ່ ແລະ ກຸ່ມຍ່ອຍ (Categorize and sub-Categorize)
- ອະທິບາຍເນື້ອໃນໃຈຄວາມແລະ ຮຽບຮຽງ (Generate themes)

**(**Hashemnezhad, 2015, pp. 54–62**)**

## 4. ຜົນການຄົ້ນຄວ້າ

ສຶກສາຜົນການນໍາເອົາແນວຄິດການຮຽນຮູ້ຕະຫຼອດຊີວິດ ໄປໃຊ້ໃນການປະຕິບັດຕົວຈິງຂອງນັກສຶກສາ ຝຶກຫັດຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດໃນ ສົກສຶກສາ 2023-2024 ເປັນການສຶກສາທາງດ້ານປະລິມານ ແລະ ຄຸນນະພາບໂດຍການນໍາໃຊ້ຄ່າຄວາມຖີ່ (f), ຄ່າສະເລ່ຍ ($\bar{X}$) ແລະ ສ່ວນຮ້ອຍ (%) ແລະ ການວິເຄາະຕາມເນື້ອໃນໃຈຄວາມ (Thematic Analysis) ອີງໃສ່ຄໍາຖາມ ແລະ ຈຸດປະສົງຂອງການຄົ້ນຄວ້າຕາມລໍາດັບດັ່ງນີ້:

*4. 1 ຂໍ້ມູນພື້ນຖານຂອງກຸ່ມຕົວຢ່າງ*

ມີຜູ້ຕອບແບບສອບຖາມທັງໝົດ **8** ສາຂາວິຊາຄື: ຈິດຕະວິທະຍາການສຶກສາ, ຄູພາສາອັງກິດ. ຄູເຄມີສາດ, ຄູວິທະຍາສາດການເມືອງ, ຄູຟີຊິກສາດ, ຄູພູມສາດ, ຄູປະຫວັດສາດຄູຄະນິດສາດ ລວທັງໝົດຈໍານວນ **104** ຄົນ; ເພດຍິງ 86 ຄົນ; ເທົ່າກັບ **82.69** %; ຊາຍ 18 ຄົນ; ເທົ່າກັບ **17.31** %.

*4.2 ຄໍາຄິດເຫັນຕໍ່ກັບຄວາມຮູ້ ແລະ ການນໍາໃຊ້ເນື້ອໃນການຮຽນຮູ້ຕະຫຼອດຊີວິດ*

ຕາຕະລາງ 1: ຄວາມຮູ້ ແລະ ການນໍາໃຊ້ການຮຽນຮູ້ຕະຫຼອດຊີວິດ

| ລ/ດ | ເນື້ອໃນຄວາມຄິດເຫັນ | ລະດັບການປະຕິບັດ | |
|---|---|---|---|
| | | $\bar{X}$ | ແປຜົນ |
| 1 | ຄວາມຮູ້ກ່ຽວກັບການສຶກສາໃນໂຮງຮຽນ. ນອກໂຮງຮຽນ ແລະ ຕາມອັດທະຍາໄສ | 4.20 | ຄວາມຮູ້ ແລະ ນໍາໃຊ້ຫຼາຍ |
| 2 | ຄວາມຮູ້ ກ່ຽວກັບພາບລວມ ລະບົບການສຶກສາໃນ ສປປ. ລາວ | 3.88 | ຄວາມຮູ້ ແລະ ນໍາໃຊ້ຫຼາຍ |
| 3 | ຄວາມຮູ້ ກ່ຽວກັບ 4 ເສົາຫຼັກທາງການສຶກສາ ຂອງ UNESCO | 3.46 | ຄວາມຮູ້ ແລະ ນໍາໃຊ້ກາງ |
| 4 | ຄວາມຮູ້ ກ່ຽວກັບ ລະບົບການປະເມີນ, ຮັບຮູ້, ເທົ່າທຽມ. ທຽບໂອນ ແລະ ຢັ້ງຢືນຜົນການຮຽນ ລະຫວ່າງການສຶກສາໃນໂຮງຮຽນ. ນອກໂຮງຮຽນ. ແລະ ການສຶກສາຕາມອັດທະຍາໄສ. | 3.50 | ຄວາມຮູ້ ແລະ ນໍາໃຊ້ຫຼາຍ |
| 5 | ຄວາມຮູ້ ກ່ຽວກັບ ພາລະບົດບາດຂອງສູນການສຶກສາຊຸມຊົນ. ສູນການສຶກສານອກໂຮງຮຽນ ຂັ້ນແຂວງ. ນະຄອນຫຼວງ | 3.71 | ຄວາມຮູ້ ແລະ ນໍາໃຊ້ຫຼາຍ |
| 6 | ໄດ້ນໍາໃຊ້ຫຼັກການສອນຕາມ ຄວາມຕ້ອງການຢາກຮູ້ຂອງຜູ້ຮຽນ | 4.09 | ຄວາມຮູ້ ແລະ ນໍາໃຊ້ຫຼາຍ |

| | | | |
|---|---|---|---|
| 7 | ໄດ້ນຳໃຊ້ຫຼັກການສອນຕາມ ແນວຄວາມຄິດກ່ຽວກັບຕົນເອງ | 3.88 | ຄວາມຮູ້ ແລະ ນຳໃຊ້ຫຼາຍ |
| 8 | ໄດ້ນຳໃຊ້ຫຼັກການສອນຕາມ ປະສົບການທີ່ມີກ່ອນແລ້ວ | 4.03 | ຄວາມຮູ້ ແລະ ນຳໃຊ້ຫຼາຍ |
| 9 | ໄດ້ນຳໃຊ້ຫຼັກການສອນຕາມ ຄວາມພ້ອມໃນການຮຽນ | 3.99 | ຄວາມຮູ້ ແລະ ນຳໃຊ້ຫຼາຍ |
| 10 | ໄດ້ນຳໃຊ້ຫຼັກການສອນຕາມ ແນວທາງການຮຽນຮູ້ | 4.02 | ຄວາມຮູ້ ແລະ ນຳໃຊ້ຫຼາຍ |
| 11 | ໄດ້ນຳໃຊ້ຫຼັກການສອນຕາມ ແຮງຈູງໃຈໃນການຮຽນ | 3.96 | ຄວາມຮູ້ ແລະ ນຳໃຊ້ຫຼາຍ |
| 12 | ໄດ້ນຳໃຊ້ຫຼັກການ. ເຄື່ອງມື ແລະ ວິທີການປະເມີນຜົນການຮຽນຮູ້ສຳລັບຜູ້ໃຫຍ່ | 3.78 | ຄວາມຮູ້ ແລະ ນຳໃຊ້ຫຼາຍ |
| 13 | ໃນການເຮັດວຽກຕົວຈິງໄດ້ນຳໃຊ້ທັດສະດີກ່ຽວກັບການສື່ສານ | 4.09 | ຄວາມຮູ້ ແລະ ນຳໃຊ້ຫຼາຍ |
| 14 | ໃນການເຮັດວຽກຕົວຈິງໄດ້ນຳໃຊ້ທັດສະດີກ່ຽວກັບການເຮັດວຽກເປັນທີມ | 4.07 | ຄວາມຮູ້ ແລະ ນຳໃຊ້ຫຼາຍ |
| 15 | ໃນການເຮັດວຽກຕົວຈິງໄດ້ນຳໃຊ້ທັດສະດີກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ | 3.94 | ຄວາມຮູ້ ແລະ ນຳໃຊ້ຫຼາຍ |
| 16 | ໃນການເຮັດວຽກຕົວຈິງໄດ້ນຳໃຊ້ທັດສະດີກ່ຽວກັບການຕັດສິນໃຈ | 4.03 | ຄວາມຮູ້ ແລະ ນຳໃຊ້ຫຼາຍ |
| 17 | ໃນການເຮັດວຽກຕົວຈິງໄດ້ນຳໃຊ້ທັດສະດີກ່ຽວກັບພາວະການເປັນຜູ້ນຳ | 3.99 | ຄວາມຮູ້ ແລະ ນຳໃຊ້ຫຼາຍ |
| 18 | ໃນການເຮັດວຽກຕົວຈິງທ່ານໄດ້ນຳໃຊ້ທັດສະດີກ່ຽວກັບການບໍລິຫານຈັດການຕົນເອງ | 3.97 | ຄວາມຮູ້ ແລະ ນຳໃຊ້ຫຼາຍ |
| ***ສະເລ່ຍລວມ*** | | ***3.70*** | ***ຄວາມຮູ້ ແລະ ນຳໃຊ້ຫຼາຍ*** |

ຈາກຕາຕະລາງທີ 1 ເຫັນວ່າ ຄວາມຮູ້ ແລະ ການນຳໃຊ້ເນື້ອໃນການຮຽນຮູ້ຕະຫຼອດຊີວິດໃນພາບລວມເຫັນວ່າມີຄ່າສະເລ່ຍເທົ່າກັບ 3.70 ເຊິ່ງຢູ່ໃນ ລະດັບຄວາມຮູ້ ແລະ ນຳໃຊ້ໃນລະດັບຫຼາຍ; ເມື່ອພິຈາລະນາເປັນລາຍຂໍ້ເຫັນວ່າຄວາມຮູ້ ກ່ຽວກັບການ ສຶກສາໃນໂຮງຮຽນ. ,ນອກໂຮງຮຽນ ແລະ ຕາມອັດຕະຍາໄສມີຄ່າສະເລ່ຍສູງສຸດຄື 4.20 ລະດັບຄວາມຮູ້ ແລະ ນຳໃຊ້ໃນລະດັບຫຼາຍ; ຮອງລົງມາແມ່ນການນຳໃຊ້ຫຼັກການສອນຕາມຄວາມຕ້ອງການຢາກຮູ້ຂອງຜູ້ຮຽນ ແລະ ການເຮັດວຽກຕົວຈິງໄດ້ນຳໃຊ້ທັດສະດີກ່ຽວກັບການສື່ສານມີຄ່າສະເລ່ຍ 4.09 ລະດັບຄວາມຮູ້ ແລະ ນຳໃຊ້ໃນລະດັບຫຼາຍ; ໜ້ອຍກວ່າໝູ່ແມ່ນຄວາມຮູ້ ກ່ຽວກັບ 4 ເສົາຫຼັກທາງການສຶກສາ ຂອງ UNESCO ມີຄ່າສະເລ່ຍ 3.46.

*4.3* ການຈັດລຽງລຳດັບທັກສະການຮຽນຮູ້ຕະຫຼອດຊີວິດ 6 ທັກສະ

ຕາຕະລາງ 2: ການນຳໃຊ້ 6 ທັກສະທາງສັງຄົມ

| **ລ/ດ** | **ເນື້ອໃນຄວາມຄິດເຫັນ** | **ການຈັດລຳດັບ** | |
|---|---|---|---|
| | | $\bar{X}$ | **ລຳດັບ** |
| 1 | ການສື່ສານ | 1.58 | 1 |
| 2 | ການເຮັດວຽກເປັນທີມ | 2.08 | 2 |
| 3 | ການແກ້ໄຂຂໍ້ຂັດແຍ່ງ | 2.37 | 6 |
| 4 | ການຕັດສິນໃຈ | 2.18 | 5 |
| 5 | ພາວະການເປັນຜູ້ນຳ | 2.13 | 4 |
| 6 | ການບໍລິຫານຈັດການຕົນເອງ | 2.11 | 3 |
| 7 | ຄ່າສະເລ່ຍລວມ | 2.07 | 7 |

ຈາກຕາຕະລາງທີ 2 ເຫັນວ່າ ການຈັດລຽງລຳດັບທັກສະການຮຽນຮູ້ຕະຫຼອດຊີວິດທັງ 6 ທັກສະເຫັນວ່າທຸກທັກສະແມ່ນໄດ້ນຳໃຊ້ຢູ່ໃນລະດັບຫຼາຍທັງໝົດທຸກທັກສະຢູ່ໃນລະດັບທີ່ໃກ້ຄຽງກັນ ແຕ່ເມື່ອວິເຄາະເປັນແຕ່ລະຂໍ້ແລ້ວເຫັນວ່າ ທັກສະທີ່ຖືກນຳໃຊ້ຫຼາຍທີ່ສຸດເປັນອັນດັບ 1 ແມ່ນທັກສະການສື່ສານ, ນຳໃຊ້ຫຼາຍລະດັບທີ 2 ແມ່ນທັກສະການເຮັດວຽກເປັນທີມ, ນຳໃຊ້ຫຼາຍລະດັບທີ 3 ແມ່ນທັກສະການບໍລິຫານຈັດການຕົນເອງ, ນຳໃຊ້ຫຼາຍລະດັບທີ 4 ແມ່ນພາວະຜູ້ນຳ, ນຳໃຊ້ຫຼາຍລະດັບທີ 5 ແມ່ນ ການຕັດສິນໃຈ ແລະ ນຳໃຊ້ຫຼາຍລະດັບທີ 6 ແມ່ນທັກສະການແກ້ໄຂຂໍ້ຂັດແຍ່ງ.

*4.4 ຜົນການສຳພາດວິທີການຮຽນ-ການສອນໃນ 3 ຮູບແບບ, ວິທີປັບການຮຽນ-ການສອນ ແລະ ບົດຮຽນທີ່ຕ້ອງການຮຽນຮູ້*

ຈາກການສຳພາດນັກສຶກສາຝຶກຫັດໃນບັນດາສະຖານການສຶກສາເປົ້າໝາຍ (ນະຄອນຫຼວງວຽງຈັນ ແລະ ບໍລິຄຳໄຊ) ຈຳນວນ 12 ແຫ່ງ, ສຳພາດນັກສຶກສາຝຶກຫັດຕົວຈິງທັງໝົດ 48 ຄົນ, ຍິງ 40 ຄົນເຊິ່ງມີຜົນການສຳພາດດັ່ງນີ້:

ຄຳຄິດເຫັນຕໍ່ການຮຽນການສອນຢູ່ຄະນະສຶກສາສາດຄວນປະສົມປະສານກັນລະຫວ່າງການຮຽນໃນຫ້ອງຮຽນ, ນອກຫ້ອງຮຽນ ແລະ ຕາມອັດທະຍາໄສແມ່ນໃຫ້ມີການປະສົມປະສານກັນທັງ 3 ຮູບແບບ ແລະ ຈັດສັນໃຫ້ເປັນລະບົບ (ກຳນົດສັດສ່ວນແຕ່ລະຮູບແບບເຂົ້າໃນຫຼັກສູດໃຫ້ເໝາະສົມ), ໃຫ້ມີຫຼາກຫຼາຍກິດຈະກຳທັງໃນຫ້ອງຮຽນ ແລະ ນອກຫ້ອງຮຽນ, ເພີ່ມກິດຈະກຳໃຫ້ຜູ້ຮຽນສາມາດຮຽນຮູ້ຕາມອັດທະຍາໄສ, ການປະຕິບັດຕົວຈິງໃຫ້ສອດຄ່ອງກັບເນື້ອໃນຂອງບົດຮຽນ ແລະ ຈຸດປະສົງ ຜົນໄດ້ຮັບຂອງຫຼັກສູດເພື່ອເຮັດໃຫ້ຜູ້ຮຽນເກີດທັກສະ ແລະ ຫົວຄິດປະດິດສ້າງເປັນຂອງຕົວເອງ.

ລະບົບການຮຽນ-ການສອນສອນຂອງ ສປປ ລາວ ຄວນມີການປັບປຸງຢູ່ 3 ດ້ານຄື: 1) ເຕັກນິກການສອນ ແລະ ສິ່ງອຳນວຍຄວາມສະດວກ ໂດຍການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ applications ຊ່ວຍເຂົ້າໃນການສອນເພີ່ມເຕັກນິກໃນການຮຽນ-ການສອນໃຫ້ຫຼາກຫຼາຍທັງໃນໂຮງຮຽນ, ນອກໂຮງຮຽນ ແລະ ຕາມອັດທະຍາໄສໃຫ້ຄົບຕາມ 3 ລັກສະນະ 5 ຫຼັກມູນ; 2) ດ້ານຫຼັກສູດ ຄວນປັບປຸງຫຼັກສູດຂັ້ນຕ່າງໆໃຫ້ທັນຕໍ່ສະພາບການ, ກຳນົດການສອນໃຫ້ເປັນສັດສ່ວນຄື ທິດສະດີ, ການປະຕິບັດຕົວຈິງ ແລະ ການຮຽນຮູ້ດ້ວຍຕົວເອງເນັ້ນການຮຽນຮູ້ໃຫ້ສາມາດນຳໄປໃຊ້ໃນຊີວິດປະຈຳວັນໃຫ້ຫຼາຍຂຶ້ນ; 3) ດ້ານນະໂຍບາຍ ຍົກສູງນະໂຍບາຍສົ່ງເສີມການສຶກສາເຜີຍແຜ່ປະຊາສຳພັນກ່ຽວກັບຄວາມສຳຄັນຂອງການສຶກສາໃຫ້ທົ່ວເຖິງທັງໃນຕົວເມືອງ ແລະ ຂົງເຂດຫ່າງໄກສອກຫຼີກ ເພື່ອດຶງດູດໃຫ້ນັກຮຽນມາຮຽນໜັງສື, ຂະຫຍາຍຕາໜ່າງການສຶກສາໃຫ້ກວ້າງ ແລະ ເນັ້ນການສອນພາສາລາວໃນເຂດຊົນເຜົ່າຫຼາຍຂຶ້ນ

ຄວາມຕ້ອງການທີ່ຈະເພີ່ມເຕີມຄວາມຮູ້ໃນລະບົບການສຶກສາຄູມີຢູ່ 4 ດ້ານຄື 1) ລະບົບເຕັກໂນໂລຊີສຳລັບການສຶກສາເພາະເປັນພື້ນຖານສຳລັບການຮຽນ-ການສອນ ແລະ ຊີວິດປະຈຳວັນ; 2) ວິທີການສອນເພີ່ມເຕີມ ເຕັກນິກ ຫຼື ວິທີສິດສອນທີ່ ຫຼາກຫຼາຍ ເນັ້ນໃຫ້ຜູ້ຮຽນເປັນໃຈກາງ ສອດຄ່ອງກັບການດຳລົງຊີວິດຂອງຜູ້ຮຽນ ເພື່ອສ້າງຄວາມມານະອົດທົນ ແລະ ມີຈາລິຍະທຳທີ່ດີງາມ; 3) ທັກສະການຮຽນຮູ້ຕ່າງໆ (ການຮຽນຮູ້ຕະຫຼອດຊີວິດ) ທັກສະ ການບໍລິຫານຕົນເອງ, ການສ້າງແຮງຈູງໃຈ, ທັກສະການບໍລິຫານວຽກ, ທັກສະການແກ້ໄຂບັນຫາ, ທັກສະການເປັນຜູ້ນຳ, ທັກສະວິຊາຊີບ, ການສື່ສານ, ການຊອກວຽກເຮັດງານທຳ ແລະ 4) ພາສາຕ່າງປະເທດພາສາອັງກິດ, ພາສາຈີນເພື່ອຈະນຳໃຊ້ໃນການປະກອບອາຊີບໃນອະນາຄົດ.

## 5. ອະພິປາຍຜົນ

ຄວາມຮູ້ ແລະ ການນຳໃຊ້ເນື້ອໃນການຮຽນຮູ້ຕະຫຼອດຊີວິດໃນພາບລວມເຫັນວ່າມີຄ່າສະເລຍເທົ່າກັບ 3.70; ເນື່ອງຈາກແນວຄິດການຮຽນຮູ້ຕະຫຼອດຊີວິດເປັນການປະສົມປະສານລະຫວ່າງການຮຽນຮູ້ໃນໂຮງຮຽນ, ນອກໂຮງຮຽນ ແລະ ຕາມອັດທະຍາໄສພ້ອມກັນນັ້ນ ກໍມີທິດສະດີກ່ຽວກັບການສຶກສາຜູ້ໃຫຍ່ ແລະ ທັກສະທາງສັງຄົມເຊິ່ງຊ່ວຍໃຫ້ເຕີມເຕັມ ຄວາມສາມາດຂອງບຸກຄົນ ແລະ ການມີສ່ວນຮ່ວມກັບສັງຄົມໄດ້ດີຂຶ້ນພ້ອມທັງຕິດພັນກັບຮູບແບບການຮຽນ-ການສອນໂດຍເອົາຜູ້ຮຽນເປັນໃຈກາງຂອງໂຮງຮຽນສາມັນສຶກສາກໍຄືການສຶກສາຊັ້ນສູງສອດຄ່ອງກັບສຸກສັນ ໄຊຍະວົງ ພ້ອມຄະນະ (2022) ໂດຍສຶກສາຄວາມຄິດເຫັນກ່ຽວກັບຄວາມຕ້ອງການ ໃນການຝຶກອົບຮົມວິຊາການຮຽນຮູ້ຕະຫຼອດຊີວິດຂອງສະຖາບັນການສຶກສາ, ອີງການພາກລັດ ແລະ ເອກະຊົນ ທີ່ມີຄວາມສົນໃຈ, ນະຄອນຫຼວງວຽງຈັນຄື ຜູ້ເຂົ້າຮ່ວມທັງໝົດໃນການສຶກສາຄັ້ງນີ້ມີຄວາມຕ້ອງການໃນການຝຶກອົບຮົມຫຼັກສູດການຮຽນຮູ້ຕະຫຼອດຊີວິດຂອງຄະນະສຶກສາດ ມະຫາວິທະຍາໄລແຫ່ງຊາດ. ເນື້ອໃນທີ່ຄວນເປັນຄວາມຮູ້ຫຼັກ (ສິ່ງທີ່ຕ້ອງໄດ້ຮູ້) ແມ່ນ ຄວາມເປັນມາຂອງການຮຽນຮູ້ຕະຫຼອດຊີວິດ, ນະໂຍບາຍຕ່າງໆຕໍ່ການຮຽນຮູ້ຕະຫຼອດຊີວິດ, ການພັດທະນາແບບຍືນຍົງ, ນະໂຍບາຍສາກົນຕໍ່ກັບການຮຽນຮູ້ຕະຫຼອດຊີວິດ, ແນວຄິດ-ທິດສະດີການຮຽນຮູ້ສຳລັບຜູ້ໃຫຍ່, ຈຸດພິເສດການຮຽນຮູ້ຂອງຜູ້ໃຫຍ່, ການສຶກສາຜູ້ໃຫຍ່ໃນເປົ້າໝາຍການພັດທະນາແບບຍືນຍົງ ແລະ ຄວາມເປັນມາ, ຄວາມໝາຍຂອງວິທີການສິດສອນຜູ້ໃຫຍ່, ທັກສະການຕັດສິນໃຈ, ການແກ້ໄຂຂໍ້ຂັດແຍ່ງ ແລະ ພາວະຄວາມເປັນຜູ້ນຳ, ຄວາມສຳຄັນຂອງການປະເມີນຜົນການຮຽນຮູ້ສຳລັບຜູ້ໃຫຍ່, ແນວຄິດ-ທິດສະດີການປະເມີນການຮຽນຮູ້ສຳລັບຜູ້ໃຫຍ່, ຈຸດປະສົງຂອງການປະເມີນຜູ້ໃຫຍ່ ແລະ ຫຼັກການຂອງການປະເມີນຜູ້ໃຫຍ່.

ແນວທາງໃນການສົ່ງເສີມການປັບເນື້ອໃນ ແລະ ການສອນການຮຽນຮູ້ຕະຫຼອດຊີວິດ ຕາມຄວາມຕ້ອງການຂອງນັກສຶກສາຕໍ່ລະບົບການຮຽນ-ການສອນສອນ ຂອງ ສປປ ລາວ ຄວນປະສົມປະສານກັນລະຫວ່າງການຮຽນໃນຫ້ອງຮຽນ, ນອກຫ້ອງຮຽນ ແລະ ຕາມອັດທະຍາໄສແມ່ນໃຫ້ມີການປະສົມປະສານກັນທັງ 3 ຮູບແບບ ແລະ ຈັດສັນໃຫ້ເປັນລະບົບ, ປັບປຸງເຕັກນິກການສອນ ແລະ ສິ່ງອຳນວຍຄວາມສະດວກ ໂດຍການນຳໃຊ້ເທັກໂນໂລຊີທີ່ທັນສະໄໝ applications ຊ່ວຍເຂົ້າໃນການສອນເພີ່ມເຕັກນິກໃນການຮຽນ-ການສອນໃຫ້ຫຼາກຫຼາຍທັງໃນໂຮງຮຽນ, ນອກໂຮງຮຽນ ແລະ ຕາມອັດທະຍາໄສໃຫ້ຄົບຕາມ 3 ລັກສະນະ 5 ຫຼັກມູນ; ດ້ານຫຼັກສູດ ຄວນປັບປຸງຫຼັກສູດຂັ້ນຕ່າງໆໃຫ້ທັນຕໍ່ສະພາບການ, ກຳນົດການສອນໃຫ້ເປັນສັດສ່ວນຄື ທິດສະດີ, ການປະຕິບັດຕົວຈິງ ແລະ ການຮຽນຮູ້ດ້ວຍຕົວເອງເນັ້ນການຮຽນຮູ້ໃຫ້ສາມາດນຳໄປໃຊ້ໃນຊີວິດປະຈຳວັນໃຫ້ຫຼາຍຂຶ້ນ; ດ້ານນະໂຍບາຍ ຍົກສູງນະໂຍບາຍສົ່ງເສີມການສຶກສາເຜີຍແຜ່ປະຊາສຳພັນກ່ຽວກັບຄວາມສຳຄັນຂອງການສຶກສາໃຫ້ທົ່ວເຖິງທັງໃນຕົວເມືອງ ແລະ ຂົງເຂດຫ່າງໄກສອກຫຼີກ ເພື່ອດຶງດູດໃຫ້ນັກຮຽນມາຮຽນໜັງສື, ຂະຫຍາຍຕາໜ່າງການສຶກສາ

ໃຫ້ກວ້າງ ແລະ ເນັ້ນການສອນພາສາລາວໃນເຂດຊົນເຜົ່າຫຼາຍຂຶ້ນ, ສ້າງຄວາມເຂັ້ມແຂງດ້ານພາສາຕ່າງປະເທດພາສາອັງກິດ, ພາສາຈີນ ສອດຄ່ອງກັບທິດສະດີຂອງທ່ານ ໂນສ໌ Knowles ໄດ້ສະເໜີຂອບແນວຄິດໜຶ່ງ ແລະ ພັດທະນາເປັນຮູບແບບສຳລັບ ການປະຕິບັດການສິດສອນຜູ້ໃຫຍ່ ໃນວິທີການສິດສອນຜູ້ໃຫຍ່ ຄູສອນຄວນມີຄວາມຮູ້ ແລະ ຮັບຮູ້ຄຸນລັກສະນະພື້ນຖານຂອງຜູ້ຮຽນທີ່ເປັນຜູ້ໃຫຍ່, ເຊິ່ງຮູບແບບນີ້ປະກອບມີ 6 ຫຼັກການເຊັ່ນ: ຄວາມຕ້ອງການຢາກຮຽນຮູ້ຂອງຜູ້ຮຽນ, ແນວຄວາມຄິດກ່ຽວກັບຕົນເອງ, ປະສົບການທີ່ມີກ່ອນແລ້ວ, ຄວາມພ້ອມໃນການຮຽນ, ຄວາມສົນໃຈໃນການຮຽນ ແລະ ແຮງຈູງໃຈໃນການຮຽນ.

## 6. ສະຫຼຸບຜົນ

ຄວາມຄືບໜ້າ ແລະ ຜົນສຳເລັດໃນການສົ່ງເສີມ ການຮຽນຮູ້ຕະຫຼອດຊີວິດທີ່ຈັດຕັ້ງປະຕິບັດໄລຍະຜ່ານມາ ສະແດງອອກໃນດ້ານ ຄວາມຮູ້ ແລະ ການນຳໃຊ້ເນື້ອໃນການຮຽນຮູ້ຕະຫຼອດຊີວິດໃນພາບລວມເຫັນວ່າມີ ລະດັບຄວາມຮູ້ ແລະ ນຳໃຊ້ໃນລະດັບຫຼາຍ;ໂດຍສະເພາະຄວາມຮູ້ ກ່ຽວກັບການ ສຶກສາໃນໂຮງຮຽນ, ນອກໂຮງຮຽນ ແລະ ຕາມອັດທະຍາໄສ, ຫຼັກການສອນຕາມຄວາມຕ້ອງການຢາກຮູ້ຂອງຜູ້ຮຽນ ແລະ ການເຮັດວຽກຕົວຈິງໄດ້ນຳໃຊ້ທິດສະດີກ່ຽວກັບການສື່ສານ.

ການນຳເອົາແນວຄິດທັກສະທາງສັງຄົມສຳລັບຜູ້ໃຫຍ່ ໄປໃຊ້ໃນການເຮັດວຽກຕົວຈິງໄດ້ຈັດລຽງລຳດັບ ທັກສະການຮຽນຮູ້ຕະຫຼອດຊີວິດທັງ 6 ທັກສະເຫັນວ່າທຸກທັກສະແມ່ນໄດ້ນຳໃຊ້ຢູ່ໃນລະດັບຫຼາຍ ທຸກທັກສະຢູ່ໃນລະດັບທີ່ໃກ້ຄຽງກັນ ແຕ່ເມື່ອວິເຄາະເປັນແຕ່ລະຂໍ້ແລ້ວເຫັນວ່າ ທັກສະທີ່ຖືກນຳໃຊ້ຫຼາຍທີ່ສຸດເປັນອັນດັບ 1 ແມ່ນທັກສະການສື່ສານ, ນຳໃຊ້ຫຼາຍລະດັບທີ 2 ແມ່ນທັກສະການເຮັດວຽກເປັນທີມ, ນຳໃຊ້ຫຼາຍລະດັບທີ 3 ແມ່ນທັກສະການບໍລິຫານຈັດການຕົນເອງ, ນຳໃຊ້ຫຼາຍລະດັບທີ 4 ແມ່ນພາວະຜູ້ນຳ, ນຳໃຊ້ຫຼາຍລະດັບທີ 5 ແມ່ນ ການຕັດສິນໃຈ ແລະ ນຳໃຊ້ຫຼາຍລະດັບທີ 6 ແມ່ນທັກສະການແກ້ໄຂຂໍ້ຂັດແຍ່ງ.

ແນວທາງໃນການສົ່ງເສີມການປັບເນື້ອໃນ ແລະ ການສອນການຮຽນຮູ້ຕະຫຼອດຊີວິດ ຕາມຄວາມຕ້ອງການຂອງນັກສຶກສາຕໍ່ລະບົບການຮຽນ-ການສອນສອນ ຂອງ ສປປ ລາວ ຄວນເພີ່ມທິດສະດີການປະສົມປະສານກັນລະຫວ່າງການຮຽນໃນຫ້ອງຮຽນ , ນອກຫ້ອງຮຽນ ແລະ ຕາມອັດທະຍາໄສ ຈັດສັນໃຫ້ເປັນລະບົບ ແລະ ແນະນຳເຕັກນິກການສອນ, ສິ່ງອຳນວຍຄວາມສະດວກໂດຍການນຳໃຊ້ເທັກໂນໂລຊີທີ່ທັນສະໃໝ applications ຊ່ວຍເຂົ້າໃນການສອນໃຫ້ຫຼາກຫຼາຍທັງໃນໂຮງຮຽນ, ນອກໂຮງຮຽນ ແລະ ຕາມອັດທະຍາໄສໃຫ້ຄົບຕາມ 3 ລັກສະນະ 5 ຫຼັກມູນ; ກຳນົດການສອນໃຫ້ເປັນສັດສ່ວນຄື ທິດສະດີ, ການປະຕິບັດຕົວຈິງ ແລະ ການຮຽນຮູ້ດ້ວຍຕົນເອງເນັ້ນການຮຽນຮູ້ໃຫ້ສາມາດນຳໄປໃຊ້ໃນຊີວິດປະຈຳວັນໃຫ້ຫຼາຍຂຶ້ນ; ກຳນົດນະໂຍບາຍ ຍົກສູງການສຶກສາໃຫ້ທົ່ວເຖິງເພື່ອດຶງດູດໃຫ້ນັກຮຽນມາຮຽນໜັງສື, ເນັ້ນການສອນພາສາລາວໃນເຂດຊົນເຜົ່າໃຫ້ຫຼາຍຂຶ້ນ, ສ້າງຄວາມເຂັ້ມແຂງດ້ານພາສາຕ່າງປະເທດເຊັ່ນ:ພາສາອັງກິດ, ພາສາຈີນ

## 7. ຂໍ້ຈຳກັດຂອງການຄົ້ນຄ້ວາ

ການຄົ້ນຄວ້າຄັ້ງນີ້ແມ່ນປະຊາກອນໃນການເກັບຂໍ້ມູນຍັງບໍ່ກວ້າງຂວາງເພາະເປັນການເກັບຂໍ້ມູນສະເພາະນັກສຶກສຶກພາຍໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ແລະ ສະເພາະນັກສຶກສາສິກສຶກສາຄູວວ ເທົ່ານັ້ນບໍ່ທັນກວມເອົາອີກ 11 ສະຖາບັນສ້າງຄູທີ່ນຳໃຊ້ເນື້ອໃນຫຼັກສູດຮ່ວມກັນດັ່ງນັ້ນອາດຈະບໍ່ສົມບູນເທົ່າທີ່ຄວນ.

## 8. ຂໍ້ສະເໜີແນະ

ໃນການປັບຫຼັກສູດຄັ້ງຕໍ່ໄປຄວນກຳນົດເນື້ອໃນຫຼັກການປະສົມປະສານກັນໃນການປະຕິບັດຫຼັກສູດການຮຽນ-ການສອນໃນໂຮງຮຽນ, ນອກໂຮງຮຽນ ແລະ ຕາມອັດທະຍາໄສເພື່ອເປັນແນວທາງໃນການປະຕິບັດ.

ສົ່ງເສີມການເຜີຍແຜ່ຄວາມສຳຄັນຂອງການສຶກສາ ແລະ ການຮຽນຮູ້ຕະຫຼອດຊີວິໃຫ້ກວ້າງຂວາງ ແລະ ທົ່ວເຖິງ.

ການຈັດການຮຽນ-ການສອນຄວນໃຫ້ມີຫຼັກສະນະຫຼາກຫຼາຍ ເຊັ່ນ: ການຮຽນໃນຫ້ອງຮຽນ, ການຮຽນນອກຫ້ອງຮຽນ, ຮຽນຕາມອັດທະຍາໄສຕາມຄວາມຕ້ອງການຂອງຜູ້ຮຽນເພື່ອໃຫ້ຜູ້ຮຽນເກີດການຄົ້ນຄິດ ແລະ ເກີດທັກສະສາມາດນຳໄປໃຊ້ໃນຊີວິດປຈຳວັນໄດ້.

ຝຶກທັກສະຊີວິດ ແລະ ການນຳໃຊ້ເຕັກໂນໂລຊີການຮຽນ-ການສອນໃຫ້ທັນສະໄໝ ເສີມໃຫ້ກັບນັກສຶກສາຄູໃຫ້ຫຼາກຫຼາຍ ເຊັ່ນ: ທັກສະການສື່ສານ, ທັກສະອາຊີບ, ພາວະຜູ້ນຳ, ການບໍລິຫານເວລາ, ການແກ້ໄຂຂໍ້ຂັດແຍ້ງ, ການບໍລິຫານຈັດການຕົນເອງ, ການນຳໃຊ້ applications ສຳລັບການສຶກສາເພື່ອຊ່ວຍເຂົ້າໃນການໃຊ້ໃນຊີວິດປະຈຳວັນ.

## 9. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2015). *ກົດໝາຍການສຶກສາ.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2015). *ກົດໝາຍການສຶກສາ.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ. (2023). *ແຜນຝຶກຫັດວິຊາຊີບຄູ ສົກສຶກສາ 2023-2024.*

ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.(2024). ຂໍ້ກຳນົດວ່າດ້ວຍຝຶກຫັດວິຊາຊີບຄະນະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ

ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.(2024). *ບົດສະຫຼຸບຜົນການຈັດຕັ້ງປະຕິບັດໂຄງການ DVVI 2023*

ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.(2023). *ການຮຽນຮູ້ຕະຫຼອດຊີວິດ 2023*

ຈິນຕະນາ ສູດຈານັນ. (2021). *ການສຶກສາຕະຫຼອດຊີວິດ ແລະ ການພັດທະນາຊຸມຊົນ.* Bangkok: O.S Priting House.

ສຸມາລີ ສັງສີ. (2016, 5 11). *ການພັດທະນາສັງຄົມແຫ່ງການຮຽນຮູ້ເພື່ອສົ່ງເສີມການຮຽນຮູ້ຕະຫຼອດຊີວິດ.* ໄດ້ທົດລອງຄືນ 7 6, 2017, ຈາກ www.youtube.com: https://www.youtube.com/watch?v=RLUdLSjo9oM

ສຸວິມົນ ຕິພານັນ. (2007). *ການປະເມີນໂຄງການ: ແນວທາງສູ່ການປະຕິບັດ.* ກຸງເທບ: ຈຸລາລົງກ່ອນມະຫາວິທະຍາໄລ.

ສຸວິມົນ ວອງວານິດ. (2007). *ການວິໃຈປະເມີນຄວາມຕ້ອງການຈຳເປັນ.* ປະເທດໄທ, ກຸງເທບ: ຈຸລາລົງກອນມະຫາວິທະຍາໄລ.

ສູວິທິດາ ສິຣິບຸນຫຼັງ. (2554). *ການພັດທະນາແບບຍືນຍົງ.* ກຸງເທບ: ຈຸລາລົງກອນມະຫາວິທະຍາໄລ.

ບຸນຊົມ ສີສະອາດ. (2545). *ການວິໃຈຂັ້ນເບື້ອງຕົ້ນສະບັບພິມຄັ້ງທີ 7 ແກ້ໄຂເພີ່ມເຕີມ.* ກຸງເທບ: ສຸວິລິຍະສານ.

ລັດຖະບານ ສປປ ລາວ. (2020). *ດຳລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດ.* ນະຄອນຫຼວງ: ລັດຖະບານ ສປປ ລາວ ເລກທີ 208/ລບ 23.03.2020.

Alheit, P. & Kammler. E. (1998). *Lifelong learning and its impact on social and regional development.* Breman: Donat Verlag.

Bauman, Z. (1993). *Postmodern Ethics* . Oxford : Blackwell.

Botkin J.W., Elmandjra M. & Malitza, M. (1979). *No Limits to Learning: Bridging the Human Gap.* Oxford: Pergamon. Retrieved March 18th, 2025 from http://www.mext.go.jp/component/a_menu/education/detail/icsFiles/afieldfile/2011/ 05/23/1306240_011.pdf.

Europa. (2009, February 14). *Policy Areas: Lifelong Learning, What is Lifelong Leaning?* Retrieved from European Commission: https://ec.europa.eu/education/policies/about-education-policies_en

European Council and European Commission .(2010). *Key competences for a changing world:.* Brussels: European Council and European Commission .

Faris. J. and Peterson. W.(2000). *Learning-based community development: Lessons learned for British Columbia.* Victoria: Ministry of Community Development, Cooperatives and Volunteers .

James H. (2007). *Stronge Qualities of Effective Teachers*, 2nd Edition

Knowles, Malcolm, S.(2005). *The Modern Practice of Adult education: From Pedagogy to andragogy. New*

Katzenbach, J. R., & Smith, D. K. (1993). *The discipline of teams*. Harvard Business Review.

Katzenbach, J. R., & Smith, D. K. (2005). The discipline of teams. *Harvard Business Review*, *83*(7), 1-10.

Mocker & Spear .(1982). *Lifelong Learning: Formal, Nonformal, Informal, and Self-Directed***.**

New Delhi Society for Participatory Research in Asia (PRIA) .(2011). *A Manual for Participatory Training Methodology in Development.*

Pretty, Jules N.; Guijt, Irene; Scoones, Ian; Thompson, John (1995). *A Trainer's Guide for Participatory Learning and Action*, London.

Park, S. (2013, March 20). *An overview on the lifelong learning center in Korea*. Retrieved from An overview on the lifelong learning

Roy KILLEN. (2013). Effective *Teaching Strategies Lessons from Research.* Sixth Edition.

UNESCO. (n.d). *The four pillars of learning*. 7 6, 2017, www.unesco.org: http://www.unesco.org/new/en/education/networks/global-networks/aspnet/about-us/strategy/the-four-pillars-of-learning/

UNESCO. (1997). *The Hamburg declaration on adult learning, fifth international conference on adult education: CONFINTEA V.* Hamburng: UNESCO.

UNESCO. (1998). *World conference on higher education.* Paris: UNESCO.

Woodcock, M., & Francis, D. (1994). *Teambuilding strategy*. Gower Publishing Company.